**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 10 ມີຖຸນາ 2007 ( 06-10-2007 )**

---

## <u>ປະຕິບັດການເຊື່ອຟັງຢ່າງແທ້ຈິງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ພຣະບັນຍັດສອງ 4:1-2, 6-9, 15-20, 39-40.

<u>ຄຳຖາມແຫ່ງຊີວິດ:</u> ຂ້າພະເຈົ້າຈະເຊື່ອຟັງພຣະເຈົ້າຢ່າງພາກພຽນໄດ້ຢ່າງໃດ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າມີພຣະປະສົງຢາກໃຫ້ໄພ່ພົນຂອງພຣະອົງເຊື່ອຟັງ ແລະພຣະອົງ ກໍຈະອວຍພອນໃຫ້ແກ່ຜູ້ທີ່ເຮັດຢ່າງພາກພຽນນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ຮັກການອຸທິດຕົນຕໍ່ພຣະເຈົ້າໂດຍ:

- ການສຳຫລວດເບິ່ງຜົນຂອງການຕິດຕາມຄຳສັ່ງຂອງພຣະເຈົ້າ, ແທນທີ່ຈະແມ່ນການປ່ຽນແປງມາຕຖານຂອງພຣະອົງ ແລະ
- ການຕັດສິນໃຈສແວງຫາ ແລະການເຊື່ອຟັງແຜນການຂອງພຣະເຈົ້າໃນທຸກ ໆ ກໍຣະນີທີ່ທ່ານກຳລັງປະເຊີນຢູ່.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ບົດນຳ</u>:** ໃຫ້ຄວາມສັມພັນຂອງທ່ານຕິດພັນຢູ່ກັບພຣະເຈົ້າ

ໃນພຣະຄັມພີທີ່ພວກເຮົາຈະຮຽນນຳກັນມື້ນີ້ມີຢູ່ດ້ວຍກັນ 4 ເປົ້າໝາຍ:

## 1. <u>ໃຫ້ພຣະຄຳຂອງພຣະເຈົ້າເປັນມາຕຖານຂອງພວກທ່ານ:</u> ( ພບຢ 4:1-2

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 4:1-2

2) **ແນະນຳ:** ຈົ່ງປະຕິບັດຮັກສາພຣະຄຳຮັດຂອງພຣະເຈົ້າເພື່ອທ່ານຈະໄດ້ຮັບຄວາມລອດພົ້ນ, ເພາະວ່າ ພຣະເຈົ້າໄດ້ຊົງເປີດເຜີຍຂໍ້ຄວາມເຫລົ່ານີ້ໄວ້ໃນພຣະທັມພຣະນີມິດຢ່າງຊັດເຈນ.

- ຊີວິດໃໝ່ເລີ່ມຕົ້ນໃນເມື່ອຄົນບາບໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າໂດຍພຣະຄຸນທາງຄວາມເຊື່ອ ໃນພຣະເຢຊູຄຣິດ.

3) ພວກເຮົາສາມາດໝັ້ນໃຈໃນການເປີດເຜີຍຂອງພຣະເຈົ້າທີ່ປະທານພຣະຄຳໃຫ້ແກ່ພວກເຮົາ.

4) ພວກເຮົາຈຳເປັນຕ້ອງຮູ້ວ່າພຣະເຈົ້າເປັນທີ່ໄວ້ວາງໃຈຂອງຄົນໃນໂລກ, ບ່ອນໃດທີ່ບໍ່ມີພຣະເຈົ້າ ບ່ອນ ນັ້ນກໍຈະບໍ່ມີຄຸນຄ່າ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ພບຢ 4:1-2 )

1) ເຫດຜົນອັນໃດທີ່ຕ້ອງສອນພຣະຄຳຂອງພຣະເຈົ້າໃຫ້ແກ່ສັງຄົມທົ່ວໄປ?

2) ທ່ານສາມາດສຶກສາພຣະຄຳຂອງພຣະເຈົ້າດ້ວຍທາງໃດແດ່?

3) ໃນທາງໃດທີ່ພຣະເຈົ້າໄດ້ເວົ້າກັບທ່ານໂດຍຜ່ານທາງພຣະຄຳຂອງພຣະອົງ?

4) ທ່ານຮູ້ຈັກໃຜແດ່ທີ່ກະຕືລືລົ້ນໃນເຣື່ອງພຣະຄຳຂອງພຣະເຈົ້າ?

## 2. <u>ປົກປ້ອງຄຳພຍານຂອງທ່ານຢ່າງລະມັດລະວັງ:</u> (ພບຢ 4:6-9 )

1) ຂໍໃຫ້ອາສາສມັກອ່ານພຣະທັມ ພບຢ 4:6-9

2) ຂຽນ " **ໃຫ້ພຣະຄຳພຣະເຈົ້າເປັນມາຕຖານຂອງທ່ານ** " ໃສ່ກະດານ ຈຸດເປົ້າໝາຍນັ້ນກໍຄື " ປົກປ້ອງຄຳພຍານຂອງທ່ານຢ່າງລະມັດລະວັງ"

- ຈອກນ້ຳດື່ມອັນນຶ່ງມີເຈັ້ຽທີ່ຖ້ອຍຄຳຕິດໄວ້ວ່າ " **ຄຳພຍານຂອງຂ້ອຍ** " ສັງເກດເບິ່ງວ່າ ຄຳພຍານ ຂອງພວກເຮົາມີຄວາມສາມາດເຮັດໃຫ້ນ້ຳນັ້ນສົດໃສສະອາດຢູ່, ຊ່ອຍ, ແລະປົວແປງສິ່ງທີ່ຢູ່ອ້ອມຂ້າງພວກເຮົາ.

**ບົດສົນທະນາ:** 1) " **ທ່ານເທົ່ານັ້ນເປັນພຣະຄັມພີທີ່ຄົນບາງຄົນທີ່ບໍ່ເຄີຍອ່ານ** " ແລ້ວ ໃຫ້ນັກຮຽນຂຽນສິ່ງທີ່ກ່ຽວຂ້ອງພົວພັນຂອງປໂຍກນີ້ໃນຊີວິດຂອງເຂົາເຈົ້າ.

2) ຂໍໃຫ້ນັກຮຽນຜູ້ນຶ່ງເລົ່າເຣື່ອງພໍ່ແມ່ ຫລື ພໍ່ເຖົ້າ ແມ່ເຖົ້າຂອງຕົນໃຫ້ໝູ່ຟັງວ່າ ຊີວິດການເປັນຢູ່ຂອງພວກເພິ່ນ ໄດ້ເປັນພຍານຕໍ່ຄວາມເຊື່ອຂອງລາວຢ່າງໃດ? ໃນ (ຂໍ້ທີ 9 ) ວ່າ ພໍ່ແມ່ ແລະປູ່ຍ່າຕາຍາຍຂອງຄຣິສຕຽນ ມີຄວາມລະມັດລະວັງດີ ມີຄວາມຮັບຜິດຊອບຕໍ່ລູກຕໍ່ຫລານໃຫ້ຮູ້ຈັກຮັກແພງພຣະເຈົ້າ.

3) ການປົກປ້ອງຄຳພຍານທີ່ດີນັ້ນກໍຄື ຄວາມຂຍັນໝັ່ນພຽນ ເພາະວ່າຄົນໃນຄອບຄົວເບິ່ງແຍງ ແລະຟັງຄວາມ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ພບຢ 4:6-9

1. ຄວາມເຊື່ອຂອງໃຜທີ່ສະແດງໃຫ້ເຫັນພຣະຄຳ ແລະການກະທຳທີ່ມີຢູ່ໃນຕົວທ່ານ?
2. ພວກເຮົາຈະລະມັດລະວັງຢ່າງໃດທີ່ຈະເຮັດໃຫ້ພຣະເຈົ້າໄດ້ກຽດໃນຄຳພຍານຂອງເຮົາ?

## 3. <u>ຫລີກເວັ້ນຈາກການບູຊາຮູບໂຄຣົບຈົນສຸດຄວາມສາມາດ:</u> ( ພບຢ 4:15-20)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 4:15-20

2) ຂຽນ " **ຫລີກເວັ້ນຈາກການບູຊາຮູບໂຄຣົບຈົນສຸດຄວາມສາມາດ**" ໃຫ້ນັກຮຽນເວົ້າເຫດຜົນຂອງຮູບໂຄຣົບວ່າເປັນແນວໃດ?

3) ເວົ້າເຫດຜົນພຣະຄັມພີແຫ່ງຄວາມຈິງ, ພຣະຄຳພຣະເຈົ້າ, ສິ່ງທີ່ພຣະເຈົ້າໄດ້ຊົງກະທຳ ແລະປະທານໃຫ້ພວກເຮົາ

ນັ້ນມາເພື່ອໃຫ້ເຂົ້າໃຈໃນການເຊື່ອຖື ແລະນະມັສການພຣະເຈົ້າ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ພບຢ 4:15-20

1. ຮູບໂຄຣົບແບບໃດທີ່ຄົນນະມັສການຢູ່ໃນສມັຍນີ້?
2. ການບູຊາໃນທາງໃດທີ່ເປັນການຣຸກຮານໃນຊີວິດຂອງທ່ານ?
3. ທ່ານຈະຫລີກເວັ້ນການບູຊາຮູບໂຄຣົບໄດ້ຢ່າງໃດ?
4. ສິ່ງໃດເປັນຮູບໂຄຣົບໃນວັຍຂອງທ່ານ, ເວລາທ່ານຍັງເປັນຊາວໜຸ່ມ, ເປັນຜູ້ໃຫຍ່ແລ້ວຫລືວ່າດຽວນີ້ບໍ່?
5. ການອະທິຖານ, ການນະມັສການ, ການສຶກສາພຣະຄັມພີໄດ້ຊ່ອຍໃຫ້ທ່ານອອກຈາກການບູຊາຮູບໂຄຣົບໄດ້ບໍ່?

**<u>4. ສຳນຶກໄດ້ວ່າພຣະເຈົ້າອວຍພອນຜູ້ເຊື່ອຟັງ:</u>** ພຣະບັນຍັດສອງ 4:39-40

1) ຂໍໃຫ້ນັກຮຽນອາສາສມັກອ່ານ ພບຢ 4:39-40
2) ແບ່ງປັນເວລາຊີວິດຂອງທ່ານເວລາທີ່ທ່ານເຊື່ອຟັງພຣະເຈົ້າເຊັ່ນທ່ານມີ: ການງານທີ່ດີ, ມີລູກຟັງຄວາມ, ມີຄວາມຮັກຄວາມເມດຕາຕໍ່ຄົນອື່ນ, ຄວາມຖ່ອມຕົວ..
3) ຄຣິສຕຽນພວກເຮົາບໍ່ຄາດຫວັງວ່າພຣະເຈົ້າຈະປ່ອຍປະລະເລີຍແລະປະຕິເສດການເຊື່ອຟັງຂອງພວກເຮົາ ແລະ ພວກເຮົາກໍຈະໄດ້ຮັບພຣະພອນຈາກພຣະອົງໄປຕລອດ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ພບຢ 4:39-40

1. ການຝຶກແອບທາງໃດທີ່ປຸກໃຈທ່ານເອງໃຫ້ຕັ້ງໝັ້ນຢູ່ໃນຄວາມເຊື່ອໃນພຣະເຈົ້າ?
2. ຄວາມສັມພັນລະຫວ່າງການເຫັນພຣະເຈົ້າອົງທ່ຽງແທ້ພຽງອົງດຽວແລະເຊື່ອຟັງພຣະອົງນັ້ນເປັນແນວໃດ?
3. ມີພາກສ່ວນອັນໃດທີ່ພຣະເຈົ້າຊົງເອີ້ນທ່ານໃຫ້ເຊື່ອຟັງ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ມີມາຕຖານດຽວທີ່ເຊື່ອຖືໄດ້ແນ່ນອນ ແລະນຳພາການດຳເນີນຊີວິດຂອງຄວາມເຊື່ອດ້ວຍການເຊື່ອຟັງໃນພຣະເຈົ້າໂດຍພຣະຄຳຂອງພຣະອົງ.
- ຄຳສຸພາສິດ " ການກະທຳຂອງທ່ານເວົ້າອອກມາຢ່າງກຶກກ້ອງວ່າ ຂ້ອຍບໍ່ໄດ້ຍິນວ່າເຈົ້າເວົ້າຫຍັງ" ດັ່ງຜູ້ທີ່ຕິດຕາມພຣະເຢຊູຄຣິດ ພວກເຮົາກໍຄວນຢູ່ໃນທາງນັ້ນ ອີກຢ່າງນຶ່ງກໍຄືໂລກໄດ້ເຫັນຄວາມຈິງແຫ່ງຂ່າວປະເສີດທີ່ອອກຈາກພວກເຮົາ.
- ການບູຊາ-ການຍົກຣະດັບຂຶ້ນຈາກສິ່ງຕ່າງ ໆ ໃຫ້ເປັນຣະດັບຂັ້ນຕອນເປັນພຣະເຈົ້າໃນຊີວິດຂອງພວກເຮົາ-ສົມຄວນຕ້ອງຫລີກເວັ້ນໃຫ້ໄດ້.
- ຜູ້ໃດທີ່ພຍາຍາມພາກພຽນມອບຕົວໃຫ້ກັບພຣະເຈົ້າ ພຣະອົງຈະຊົງພໍພຣະທັຍໃນຄຳສັນຍາຂອງພຣະອົງທີ່ໃຫ້ໄວ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH